# ຄວາມເມດຕາ ແລະ ການອະໄພໂທດ





ແມ່ຂອງ ແກ້ວ
ໃສ່ຖົງມືຕະຫຼອດ.
ເປັນຫຍັງ ແມ່ຈຶ່ງ
ໃສ່ຖົງມືຕະຫຼອດ?
“ມືແມ່ເປັນຫຍັງຈຶ່ງ ໃສ່ຖົງມືຕະຫຼອດ?”
“ໂອ້! ບໍ່ມີຫຍັງດອກ ບໍ່ຕ້ອງຖາມ.”
ແລ້ວແມ່ກໍຍ່າງໜີ ຈາກ ແກ້ວ ໄປ.
ມີມື້ໜຶ່ງບັງເອີນທີ່ ແກ້ວ ໄດ້ເຫັນ ມືຂອງແມ່.
“ໂອ້! ເປັນຕາ ຢ້ານແທ້!”
M.CH.SOKHA


"ບໍ່ເປັນຕາເບິ່ງ! ຂີ້ເຮີ!"
ແກ້ວ ຟ້າວແລ່ນໄປຫາພໍ່.
"ລູກເປັນຫຍັງ?"
"ໂອ້! ເປັນຫຍັງ ມືຂອງແມ່
ຈຶ່ງເປັນແນວນັ້ນ?"
"ລູກເຫັນລະບໍ?"
ມື້ໜຶ່ງ...
ພໍ່ໄດ້ເລົ່າເລື່ອງໃຫ້ ແກ້ວ ຟັງວ່າເກີດຫຍັງຂຶ້ນ.
M. CH. SOKHA


ລູກກຳລັງຫຼິ້ນໄມ້ຂີດໄຟ.
ລູກຂີດອັນໜຶ່ງ ແລ້ວຖິ້ມລົງໃສ່ເຮືອນ.
ໂອ໊ຍ!!!
“ຊ່ວຍແດ່!
ຊ່ວຍແດ່!”
M.CH.SOKHA


"ໂອ໋ຍ! ລູກແກ້ວເອີ໋ຍ!"
ແມ່ອູ້ມເອົາລູກ ແລ້ວຮີບແລ່ນລົງມາຈາກເຮືອນ.


“ຈິນດາ ເປັນຫຍັງ ເຈົ້າຈຶ່ງໄຫ້?”
“ເລື່ອງນີ້ ເຮັດໃຫ້ຂ້ອຍນຶກເຖິງ ພຣະເຢຊູ ທີ່ໄດ້ຮັບ ຄວາມທໍລະມານ ຈຶ່ງເຮັດໃຫ້ພວກເຮົາພົ້ນຈາກບາບໄດ້.”
?!
ອື່ມ!?
ນີ້ແມ່ນເລື່ອງທີ່ ພຣະອົງ ກອບກູ້ເອົາພວກເຮົາ ອອກຈາກນະຮົກບ່ອນ ທີ່ໄຟໄໝ້ຢູ່ເປັນນິດ.
M.CH.SOKHA


ປະມານ 2000 ປີມາແລ້ວທີ່ ພຣະເຢຊູ ຜູ້ທີ່ເປັນ ພຣະເຈົ້າ ໄດ້ສະເດັດລົງມາເປັນມະນຸດ
ພຣະເຢຊູ ສັ່ງສອນປະຊາຊົນ
ພຣະເຢຊູ ປິ່ນປົວຜູ້ຄົນ
ແຕ່ພວກເຂົາຂົ່ມເຫັງ ພຣະເຢຊູ
ພຣະເຢຊູຖ່ອມຕົວລົງມາຈົນໄດ້ຮັບໂທດແທນ ພວກເຮົາ ຄືການຕາຍທີ່ໄມ້ກາງແຂນ.
ພຣະອົງ ໄດ້ຖືກຝັງໄວ້ ແລະຖືກບັນດານ ໃຫ້ມີຊີວິດອີກຄັ້ງ ໃນວັນຖ້ວນສາມ.
M.CH.SOKHA


“ຄວາມຮັກທີ່ ພຣະເຢຊູ ມອບໃຫ້ພວກເຮົາ ແມ່ນຍິ່ງໃຫຍ່ກວ່າ ຄວາມຮັກທີ່ແມ່ເສຍສະຫຼະໃຫ້ກັບລູກຂອງຕົນເອງ.”
“ພຣະເຈົ້າ ຊົງຮັກໂລກຫຼາຍແທ້ ຈົນປະທານ ພຣະບຸດ ອົງດຽວ ເພື່ອທຸກຄົນທີ່ເຊື່ອນັ້ນ ຈະບໍ່ຕາຍ ແຕ່ມີຊີວິດອັນຕະຫຼອດໄປເປັນນິດ.”
“ຂ້າແດ່ ພຣະບິດາ ຜູ້ສະຖິດຢູ່ສະຫວັນ ພວກເຮົາຂອບພຣະຄຸນ ພຣະເຈົ້າ.”
ພວກເຮົາຄວນ ຂອບພຣະຄຸນ ພຣະເຈົ້າ.


ຄຳຖາມສົນທະນາ
1. ພຣະເຈົ້າ ໄດ້ເຮັດຫຍັງກ່ຽວກັບ ຄວາມບາບຂອງເຈົ້າ?
2. ຍ້ອນຫຍັງ ພຣະເຢຊູ ຈຶ່ງຕາຍ ທີ່ໄມ້ກາງແຂນ?


ກິດຈະກຳທີ່ຄວນເຮັດ
ໃຫ້ພວກເຮົາຈົ່ງຂອບໃຈ ພຣະເຈົ້າ ສຳລັບສິ່ງຕ່າງໆທີ່ ພຣະອົງ ໄດ້ເຮັດເພື່ອເຮົາ.



ແຕ່ດ້ວຍພຣະກະຣຸນາປານີຂອງ ພຣະເຈົ້າ ທີ່ອຸດົມສົມບູນຫຼາຍ
ແລະດ້ວຍຄວາມຮັກຂອງ ພຣະອົງ ທີ່ມີຕໍ່ພວກເຮົາ ກໍໃຫຍ່ຫຼວງ,
ເຖິງແມ່ນວ່າ ເມື່ອພວກເຮົາໄດ້ຕາຍແລ້ວຝ່າຍຈິດວິນຍານ
ຍ້ອນພວກເຮົາບໍ່ເຊື່ອຟັງ ພຣະອົງ ກໍຍັງໄດ້ບັນດານໃຫ້ພວກເຮົາ
ເປັນຄືນມາສູ່ຊີວິດກັບ ພຣະຄຣິດ ການທີ່ພວກເຮົາໄດ້ຮັບ
ຄວາມລອດພົ້ນນັ້ນ ແມ່ນໂດຍພຣະຄຸນຂອງ ພຣະເຈົ້າ.
ແລະໄດ້ຊົງບັນດານໃຫ້ເຮົາເປັນຄືນມາດ້ວຍກັນກັບພຣະອົງ
ແລະຊົງໂຜດໃຫ້ເຮົານັ່ງໃນສະຫວັນສະຖານ
ດ້ວຍກັນກັບ ພຣະເຢຊູຄຣິດເຈົ້າ, ເພື່ອໃນຄາວ
ຕໍ່ໄປພຣະອົງຈະໄດ້ຊົງສຳແດງພຣະຄຸນ
ອັນອຸດົມເຫຼືອລົ້ນຂອງ ພຣະອົງ ຊຶ່ງ ພຣະອົງ
ໄດ້ຊົງເມດຕາເຮົາທັງຫຼາຍໃນ ພຣະຄຣິດເຈົ້າເຢຊູ.
ດ້ວຍວ່າ ຊຶ່ງເຈົ້າທັງຫຼາຍໄດ້ຖືກຊົງໂຜດ
ໃຫ້ພົ້ນນັ້ນກໍຍ້ອນພຣະຄຸນ
ດ້ວຍທາງຄວາມເຊື່ອ

ສິ່ງເຫຼົ່ານີ້ບໍ່ແມ່ນພວກເຈົ້າເຮັດເອງ
ແຕ່ ພຣະເຈົ້າ ຊົງປະທານໃຫ້.
ຄວາມພົ້ນນັ້ນ ບໍ່ແມ່ນໄດ້ມາຍ້ອນ
ການປະຕິບັດຂອງພວກເຈົ້າເອງ
ເພື່ອວ່າບໍ່ໃຫ້ຜູ້ໃດຜູ້ໜຶ່ງອວດໄດ້.

ເອເຟໂຊ 2:3-9



© Alongsiders International
www.alongsiders.org
Email: info@alongsiders.org